ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ
NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມກວດກາເນື້ອໃນຮອບດ້ານ ຕໍ່ຮ່າງກົດໝາຍ ທຫລ

ວັນທີ 31 ມີນາ 2018 ທີ່ຜ່ານມານີ້ ໄດ້ມີການຈັດກອງປະຊຸມກວດກາເນື້ອໃນ ຮອບດ້ານຕໍ່ຮ່າງກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ຢູ່ທີ່ ແຂວງ ວຽງຈັນ ໂດຍການເປັນປະທານຂອງ ທ່ານ ສົມພັນ ແພງຄຳມີ ຮອງປະທານສະພາແຫ່ງຊາດ, ຄະນະກຳມະທິການກົດໝາຍແຜນການການເງິນ ແລະ ການກວດສອບ; ທ່ານນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍ ນັກກົດໝາຍຈາກສະພາແຫ່ງຊາດ, ສຳນັກງານນາຍົກລັດຖະມົນຕີ, ກະຊວງຍຸຕິທຳ, ທະນາຄານແຫ່ງ ສປປ ລາວ ແລະ ສະມາຊິກສະພາແຫ່ງຊາດເຂົ້າຮ່ວມຫຼາຍກວ່າ 70 ທ່ານ.

ຜ່ານດຳເນີນກອງປະຊຸມໃນຄັ້ງນີ້ຜູ້ເຂົ້າຮ່ວມໄດ້ມີການເຫັນດີເປັນເອກະພາບຕໍ່ຮ່າງກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປ ລາວ, ໂດຍສະເພາະແມ່ນໂຄງຮ່າງຂອງກົດໝາຍ, ທີ່ຕັ້ງ, ພາລະບົດບາດ, ໂຄງປະກອບການຈັດຕັ້ງ ແລະ ການເຄື່ອນໄຫວຕ່າງໆ ຂອງທະນາຄານແຫ່ງ ສປປ ລາວ.

ເຖິງຢ່າງໃດກໍຕາມທີ່ປະຊຸມໄດ້ສະເໜີໃຫ້ທີມງານຄົ້ນຄວ້າ ແລະ ປັບປຸງກົດໝາຍດັ່ງກ່າວນຳໄປພິຈາລະນາ ແລະ ປັບປຸງຄືນບາງມາດຕາທີ່ເຫັນວ່າຍັງບໍ່ຊັດເຈນ ແລະ ແທດເໝາະກັບສະພາບຄວາມເປັນຈິງຊຶ່ງມີ: ມາດຕາ 9 ແລະ 10 ທີ່ກຳນົດກ່ຽວກັບສິດ ແລະ ໜ້າທີ່; ໃຫ້ທົບທວນຄືນກ່ຽວກັບໂຄງປະກອບຂອງຄະນະກຳມະການກວດກາພາຍໃນໂດຍສະແມ່ນຕຳແໜ່ງປະທານກວດກາ ພາຍໃນຂອງ ທຫລ. ນອກຈາກນີ້ແລ້ວທີ່ປະຊຸມຍັງຄົ້ນຄວ້າ ແລະ ພິຈາລະນາຄືນກ່ຽວກັບຂອບເຂດການປ່ອຍກູ້ ໃຫ້ແກ່ລັດຖະບານ, ສະຖາບັນການເງິນ ແລະ ລາຍຮັບ-ລາຍຈ່າຍຂອງ ທຫລ.

**# ຂ່າວໂດຍ: ທອງຈັນ ສຸກສະກຸນ**

**ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ**